ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ | ເລກທີ 343 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 25. 10. 2022

# ດຳລັດ
# ວ່າດ້ວຍ ການສ້າງຕັ້ງ ປ່າປ້ອງກັນແຫ່ງຊາດ ພູຫຼວງ-ພູເຂົານົກ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3962/ກປ, ລົງວັນທີ 08 ກັນຍາ 2022.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ວາງອອກ ເພື່ອປະກາດສ້າງຕັ້ງ ປ່າປ້ອງກັນແຫ່ງຊາດ ພູຫຼວງ-ພູເຂົານົກ ແນໃສ່ ຄຸ້ມຄອງປົກປັກຮັກສາປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ ໃຫ້ມີຄວາມອຸດົມສົມບູນ, ເປັນບ່ອນ ພັກຜ່ອນ, ທ່ອງທ່ຽວ ແລະ ສຶກສາຄົ້ນຄວ້າ ທາງດ້ານວິທະຍາສາດ ແນໃສ່ຮັບປະກັນການປົກປັກຮັກສາຊີວະນາໆພັນ ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ ປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ພັດທະນາເສດຖະກິດ-ສັງຄົມ ຂອງຊາດໃຫ້ເຂັ້ມແຂງ.

**ມາດຕາ 2 ທີ່ຕັ້ງ, ຂອບເຂດ ແລະ ເນື້ອທີ່ ປ່າປ້ອງກັນແຫ່ງຊາດ ພູຫຼວງ-ພູເຂົານົກ**

ປ່າປ້ອງກັນແຫ່ງຊາດ ພູຫຼວງ-ພູເຂົານົກ ຕັ້ງຢູ່ພາກກາງ ກວມເອົາ 1 ແຂວງຄື: ແຂວງຄຳມ່ວນ, ມີ 1 ເມືອງຄື: ເມືອງບົວລະພາ ຊຶ່ງຢູ່ລະຫວ່າງ ເສັ້ນແວງ ແລະ ເສັ້ນຂະໜານ ດັ່ງນີ້:

| | | |
|---|---|---|
| ທິດເໜືອ | ເສັ້ນແວງ: | 105° 45’ 34.8’’ |
| | ເສັ້ນຂະໜານ: | 17° 24’ 15.19’’ |
| ທິດໃຕ້ | ເສັ້ນແວງ: | 106° 22’ 02.3’’ |
| | ເສັ້ນຂະໜານ: | 17° 09’ 35.1’’ |
| ທິດຕາເວັນອອກ | ເສັ້ນແວງ: | 105° 54’ 33.6’’ |
| | ເສັ້ນຂະໜານ: | 17° 19’ 04’’ |
| ທິດຕາເວັນຕົກ | ເສັ້ນແວງ: | 105° 51’ 01.9’’ |
| | ເສັ້ນຂະໜານ: | 17° 13’ 57.8’’ |

ຂອບເຂດປ່າປ້ອງກັນແຫ່ງຊາດ ພູຫຼວງ-ພູເຂົານົກ ໃຫ້ອີງໃສ່ແຜນທີ່ພູມີປະເທດ ມາດຕາສ່ວນ 1: 100.000 ໂດຍໂດຍຖືເອົາເສັ້ນແວງ ແລະ ເສັ້ນຂະໜານເປັນຫຼັກ ສົມທຽບໃສ່ກັບພື້ນທີ່ຕົວຈິງ ເຊັ່ນ: ສັນພູ ຕີນພູ, ສາຍຫ້ວຍ, ສາຍນໍ້າ, ເສັ້ນທາງ ເປັນຂີດໝາຍ ເພື່ອໃຫ້ອົງການປົກຄອງທ້ອງຖິ່ນ ຕະຫຼອດຮອດປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເປັນຢ່າງດີ.

ປ່າປ້ອງກັນແຫ່ງຊາດ ພູຫຼວງ-ພູເຂົານົກ ມີເນື້ອທີ່ທັງໝົດ 40.489 ເຮັກຕາ (ສີ່ສິບພັນ ສີ່ຮ້ອຍແປດສິບເກົ້າ ເຮັກຕາ).

ທີ່ຕັ້ງ ແລະ ເນື້ອທີ່ ຂອງປ່າປ້ອງກັນແຫ່ງຊາດ ພູຫຼວງ - ພູເຂົານົກ ສະແດງໃຫ້ເຫັນ ຢູ່ແຜນທີ່ ມາດຕາສ່ວນ 1: 500.000 ທີ່ຄັດຕິດມາພ້ອມນີ້.

**ມາດຕາ 3 ການຄຸ້ມຄອງ**

ການຄຸ້ມຄອງ ປ່າປ້ອງກັນແຫ່ງຊາດ ພູຫຼວງ - ພູເຂົານົກ ແມ່ນໜ້າທີ່ ກອງຄຸ້ມຄອງປ່າປ້ອງກັນ. ສໍາລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງດັ່ງກ່າວ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 4 ແຫຼ່ງທຶນ**

ແຫຼ່ງທຶນທີ່ນໍາໃຊ້ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ ປ່າປ້ອງກັນແຫ່ງຊາດ ພູຫຼວງ-ພູເຂົານົກ ມີດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນປົກປັກຮັກສາປ່າໄມ້;
3. ກອງທຶນປົກປັກຮັກສາສິ່ງແວດລ້ອມ;
4. ການປະກອບທຶນຂອງກິດຈະການ ຫຼື ໂຄງການທີ່ດໍາເນີນໃນເຂດປ່າປ້ອງກັນ ຫຼື ພື້ນທີ່ໃກ້ຄຽງທີ່ສົ່ງຜົນກະທົບຕໍ່ ປ່າປ້ອງກັນແຫ່ງຊາດ;
5. ກອງທຶນທ່ອງທ່ຽວທໍາມະຊາດ;
6. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
7. ແຫຼ່ງທຶນອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ກະຊວງກະສິກໍາ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດ ດໍາລັດສະບັບນີ້ຢ່າງເຂັ້ມງວດ;

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 6 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 12 ທັນວາ 2022 ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ພັນຄໍາ ວິພາວັນ